ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໔/ປພຖຊ/໐໕໑໔໐໙**

# ບົດຄວາມ

## ຕອບໂຕ້ພອນປີໃໝ່ ພສ. 2552

## ຂອງ ປະທານປະເທດ (ຕອນ 4.)

## ຕ່າງປະເທດ ບໍ່ໄວ້ວາງໃຈ ແລະບີບຮັດ ໃຫ້ປ່ຽນຣັຖບານໂດຍໄວ.

ຍ້ອນວ່າ ອຳນາດບໍຣິຫານປະເທດຊາດ ຂອງພັກຣັດ ສປປລາວ. ໄດ້ມາຈາກ ການຢືມມືວຽດນາມ ເອົາທະຫານປະມານ 60 ພັນຄົນ ເຂົ້າມາປຸ້ນຈີ້ເອົາ. ພັກຣັດ ສປປລາວ. ຈິ່ງມີຄວາມຢ້ານກົວປະຊາຊົນ ຈິ່ງສືບຕໍ່ ໃຊ້ອຳນາດຜເດັດການປາຍປືນ ປາບປາມ ຈັບກຸມຄຸມຂັງປະຊາຊົນ ຢ່າງໄຮ້ມະນຸສທັມມາໂດຍ ຕລອດ. ບ້ານເມືອງ ເກີດອຶລຫິນ, ປະຊາຊົນແຕກຕື່ນ, ປະຖິ້ມບ້ານເຮືອນ ອົພຍົບໄປຢູ່ຕ່າງປະເທດ. ໃນຊ່ວງ 1975 ເຖິງ ປີ 1978 ປະຊາຊົນລາວ ໂຕນໜີຈາກປະເທດ ຫລາຍກວ່າ 500,000 ຄົນ, ຜູ້ໂຕນໜີບໍ່ທັນ, ຖືກພັກຣັດ ຈັບສົ່ງເຂົ້າສູນສັພທຸກ ດັດສ້າງຍາວນານ ຫລາຍກວ່າ 100,000 ຄົນ. ໃນນັ້ນ, ມີຫລາຍກວ່າ 30,000 ຄົນ ຖືກລົ້ມຕາຍ, ຍ້ອນຂ້າຖິ້ມ, ຍ້ອນທຸບຕີທໍຣະມານຢູ່ໃນຄຸກ ແລະ ຍ້ອນອຶດຫິວ. ໃນຈຳນວນຜູ້ເຄາະຮ້າຍ ເສັຽຊີວິດໄປນັ້ນ ກໍມີເຈົ້າຊີວິດ ສຣີສວ່າງວັທນາ ພ້ອມດ້ວຍ ມະເຫສີ ເຈົ້າຍິງຄຳຜູຍ, ອົງມົງກຸດ ເຈົ້າຟ້າຊາຍ ວົງສວ່າງ ແລະຍາຕິວົງສ໌. ນອກຈາກນັ້ນ, ຍັງມີ ຂ້າຣາຊການ ຊັ້ນຜູ້ໃຫຍ່ແລະນາຍທະຫານຣະດັບສູງ ຂອງກອງທັບພຣະຣາຊອານາຈັກລາວ ຫລາຍຄົນ ອີກດ້ວຍ.

ການບໍຣິຫານປະເທດຊາດແບບຂ້າຫາດ, ຂາດຄຸນທັມດັ່ງນີ້ ໄດ້ເຮັດໃຫ້ອົງການຈັດຕັ້ງສາກົນ ກ່ຽວ

ກັບສິດທິເສລີພາບ ປະຊາທິປະໄຕແລະຄວາມມີມະນຸສທັມ ໄດ້ທັກທ້ວງກ່າວປະນາມ ບໍ່ເວັ້ນແຕ່ລະປີ ແລະບີບຣັດ ໃຫ້ປ່ຽນຣັຖບານໂດຍໄວ. -ລາຍງານຈາກຫ້ອງການປະຊາທິປະໄຕ ສິດທິມະນຸດ ແລະແຮງງານ ຂອງສະຫະຣັດ ໃນເດືອນ 3/11/2008 ໄດ້ຣະບຸວ່າ "ປະຊາຊົນ ບໍ່ມີສິດປ່ຽນຣັຖບານຂອງຕົນໄດ້. ສະພາບຂອງຄຸກກັກຂັງ ເປິະເປື້ອນ, ສົກກະປົກ ອັນຕຣາຍຕໍ່ຊີວິດ. ການສໍ້ຣາຊບັງຫລວງຂອງຕໍາຣວດ ແລະຊຸນສານ ກໍຍັງສືບຕໍ່ມີຢູ່, ຣັຖບານ ບໍ່ເຄົາຣົບ ຕໍ່ສິດທິສ່ວນບຸກຄົນ, ບໍ່ເຄົາຣົບຕໍ່ເສລີພາບ ປະຊາທິປະໄຕ ໃນການປາກເວົ້າ, ຂ່າວສານ, ການຊຸມນຸມ, ການຈັດຕັ້ງສະມາຄົມ ແລະການເຄົາຣົບນັບຖືສາສນາຕ່າງໆ.

ມີຫລາຍອົງການຈັດຕັ້ງສາກົນ ໄດ້ເຂົ້າມາສໍາຣວດກວດກາ ກ່ຽວກັບຄວາມສາມາດໃນດ້ານວິຊາການ ແລະຄວາມໂປ່ງໃສ ໃນການນໍາໃຊ້ທຶນການຊ່ວຍເຫລືອ ເພື່ອມະນຸສທັມແລະເພື່ອການພັທນາ ທາງດ້ານເສຖກິດແລະສັງຄົມໃນລາວ ເປັນຕົ້ນ: -ໃນຕົ້ນເດືອນພຶສພາ 2003 ທ່ານ ກິມ ມິງຊາງ ຜູ້ອໍານວຍການທະນາຄານໂລກ ພ້ອມດ້ວຍຄນະ ເຂົ້າມາສໍາຣວດເບິ່ງ ການປະຕິບັດງານ ກ່ຽວກັບການຊ່ວຍເຫລືອ ໄດ້ພົບເຫັນວ່າ "ທຶນການຊ່ວຍເຫລືອສ່ວນໃຫຍ່ ນໍາເອົາໄປໃຊ້ນອກຣາຍການ, ບັນຊີຣາຍຈ່າຍ ບໍ່ລະອຽດ, ບາງໂຄງການປະຕິບັດໄປແລ້ວ ບໍ່ໄດ້ມາຕຖານ, ການປະຕິບັດພັນທະ ໃນການໃຊ້ໜີ້ກໍບໍ່ໄດ້ຕາມກໍານົດ, ຈຶ່ງໄດ້ເຂົ້າພົບທ່ານ ສີຈັນ ໂພສີຄໍາ ຣັຖມົນຕຣີການຄັງ, ທ່ານທອງລຸນ ສີສຸຣິດ ປະທານກັມການແຜນການ ແລະຄວາມຮ່ວມມື, ທ່ານ ສມານ ວິຍະເກດ ປະທານສະພາ ແລະທ່ານ ບຸນຍັງ ວໍຣະຈິດ ນາຍົກຣັຖມົນຕຣີ ໃນເວລານັ້ນ ເພື່ອແນະນໍາຕັກເຕືອນ. -ໃນວັນທີ 4/9/2003 ທ່ານ ຈາຣິດ ປຣາຊາດ ຜູ້ຊ່ວຍເລຂາທິການໃຫຍ່ສະຫະປະຊາຊາດ ກໍມາຮ່ວມເປັນປະທານກອງປະຊຸມ ທີ່ມີຕົວແທນຂອງ 34 ປະເທດ ທີ່ໃຫ້ການຊ່ວຍເຫລືອລາວແລະຜູ້ຕາງໜ້າອົງການຈັດຕັ້ງສາກົນ ທັງພາກຣັດ ແລະເອກຊົນ ເຂົ້າຮ່ວມປະມານ 200 ຄົນ ເພື່ອສໍາຣວດເບິ່ງການຊ່ວຍເຫລືອຕ່າງໆ ວ່າ "ເຂົ້າເຖິງປະຊາຊົນ ນ້ອຍຫລາຍພຽງໃດ?". -ເມື່ອເຫັນວ່າການຊ່ວຍເຫລືອ ບໍ່ເປັນໄປຕາມທີ່ໄດ້ຕົກລົງກັນ, ຜູ້ຊ່ວຍເລຂາທິການສະຫະປະຊາຊາດ ກໍໄດ້ເຂົ້າພົບທ່ານ ບຸນຍັງ ວໍຣະຈິດ, ທ່ານ ທອງລຸນ ສີສຸຣິດ ແລະທ່ານ ສົມສວາດ ເລັ່ງສວັດ ຣັຖມົນຕຣີກະຊວງການຕ່າງປະເທດ ເພື່ອແນະນໍາ ໃຫ້ຮູ້ຈັກໃຊ້ທຶນການຊ່ວຍເຫລືອນັ້ນ ໃຫ້ຖືກຕ້ອງ.

ຈະແມ່ນກອງປະຊຸມ ສະມາຄົມເອຊຽນ ຫລືກອງປະຊຸມຣັຖະສະພາ ປະເທດໃນພາກພື້ນເອເຊັຽປາຊີຟິກ ຄັ້ງທີ 17 ທີ່ ລາວເປັນເຈົ້າພາບ ກໍແມ່ນສ້າງເງື່ອນໄຂ ບີບຣັດ ໃຫ້ພັກຣັດວຽງຈັນຕ້ອງຍອມເຄົາຣົບ ຕໍ່ສິດທິເສລີພາບ ຂອງປະຊາຊົນລາວ ແລະບີບຣັດ ໃຫ້ສເນີຍັດຕິ ກ່ຽວກັບການແກ້ໄຂຄວາມຂັດແຍ່ງ ດ້ວຍການເຈຣະຈາທາງການເມືອງ ຕໍ່ກອງປະຊຸມຣັຖະສະພາ ເພື່ອເປັນຂໍ້ມູນໃຫ້ອົງການຈັດຕັ້ງສາກົນ ຈະໄດ້ຕິດຕາມເບິ່ງຢ່າງໃກ້ຊິດວ່າ ພັກຣັດ ສປປລາວ. ຈະປະຕິບັດ ຕາມຂໍ້ສເນີຂອງຕົນເອງຢ່າງຈິງຈັງ ແລະຈິງໃຈຫລາຍປານໃດ ກ່ອນທີ່ຈະຖືກບີບຣັດ ໃຫ້ໜັກເຂົ້າຕື່ມອີກ.

ນອກຈາກອົງການຈັດຕັ້ງສາກົນເຂົ້າມາຕິດຕາມຢູ່ໃນລາວແລ້ວ, ຢູ່ຕ່າງປະເທດ ກໍມີການເຄື່ອນໄຫວບີບຣັດພັກຣັດ ສປປລາວ ເໝືອນກັນ...ເຊັ່ນ: -ສະພາຢູໂຣບ ໄດ້ລົງມະຕິ ໃນເດືອນ ກໍຣະກະດາ 2003

ປະນາມການລະເມີດສິດທິມະນຸດໃນລາວຢ່າງຮຸນແຮງ, ຮຽກຮ້ອງໃຫ້ພັກຣັດວຽງຈັນ ເຄົາຣົບຕໍ່ແນວຄິດທາງການເມືອງ ທີ່ແຕກຕ່າງກັນ ແລະ ຮຽກຮ້ອງ ໃຫ້ສ້າງຄວາມສາມະຄີປອງດອງຊາດ ລະຫວ່າງລາວສອງຝ່າຍ, -ໃນວັນທີ 28 ເມສາ 2005 ສະພາຢູຣົບ ຢູ່ Strasbourg ໄດ້ກ່າວເຖິງການລະເມີດ ສິດທິມະນຸດໃນທົ່ວໂລກ, ໃນນັ້ນ, ກໍມີສາມະຊິກສະພາ ໄດ້ກ່າວປະນາມການລະເມີດສິດທິມະນຸດ ຢ່າງຮ້າຍແຮງຢູ່ໃນລາວເໝືອນກັນ. ໃນລາຍງານປະຈຳປີ ຂອງສະພາໂຢຣົບ ກໍໄດ້ສແດງຄວາມເປັນຫ່ວງ ການລະເມີດສິດທິເສຣີພາບ ໃນການເຊື່ອຖືສາສນາ ຂອງປະຊາຊົນບັນດາເຜົ່າໃນລາວ,

ພັກຣັດວຽງຈັນປະຈຸບັນນີ້, ໄດ້ສັ່ນຄອນເຫລືອທີ່ສຸດ!, ສະພາບການເມືອງ, ການເສຖກິດຫລົ້ມເຫລວ ຕົກເຂົ້າສູ່ວິກິດການຮອບດ້ານ, ພັກຣັດ ໝົດປັນຍາຈະແກ້ໄຂ, ແມ່ນກະທັ່ງໂຄງການພັທນາເສຖກິດສັງຄົມ ໃນຊ່ວງ 5 ປີຕໍ່ໄປ (2011-2015) ພັກຣັດ ກໍໄດ້ຮ້ອງຂໍໃຫ້ວຽດນາມເຮັດໃຫ້! ໜ້າສົງສານ ແລະເປັນຫ່ວງປະເທດລາວເຫລືອທີ່ສຸດ!....

ສນັ້ນ, ຂໍໃຫ້ອົງການຈັດຕັ້ງສາກົນ ບອກໃຫ້ພັກຣັດວຽງຈັນ ຮ້ອງຂໍມາຍັງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ທີ່ມີຄວາມສາມາດ ໃຫ້ການຊ່ວຍເຫລືອ ແກ່ພັກຣັດ ສປປລາວ ໄດ້ທຸກຢ່າງ, ເພາະການຕໍ່ສູ້ຂອງພວກເຮົາ ແມ່ນຕໍ່ສູ້ ເພື່ອຄວາມສາມະຄີປອງດອງຊາດ; ພວກເຮົາບໍ່ໄດ້ຕໍ່ສູ້ເພື່ອທັບມ້າງພັກທຳລາຍຣັດ ຄືດັ່ງທີ່ ພັກຣັດກ່າວຫານັ້ນແຕ່ປະການໃດ; ສັຕຣູຂອງພວກເຮົາແມ່ນຄວາມທຸກຍາກອຶດຫິວ ແລະຕັດສິດທິເສຣີພາບຂອງປະຊາຊົນນັ້ນເອງ ທີ່ຈະຕ້ອງແກ້ໄຂ.

ພວກເຮົາ ປະຊາຊົນພັກ ແລະກຳທັບເສຣີປະຊາທິປະໄຕລາວ ສແດງຄວາມຂອບໃຈ ນຳອົງການຈັດຕັ້ງສາກົນ ປະເທດຍຸທສາດ ໃນການແກ້ໄຂບັນຫາລາວ ແລະປະຊາຊົນ ປະເທດເພື່ອນມິຕໃນທົ່ວໂລກ ທີ່ໄດ້ປະກອບສ່ວນຢ່າງເຂງແຮງ ເປັນເຄືອຄ່າຍ ປ້ອງບັນຫາລາວ ເຂົ້າສູ່ເວທີສາກົນ, ເຮັດໃຫ້ພັກຣັດວຽງຈັນ ຕົກເຂົ້າຢູ່ໃນທ່າຮັບ ຈົນຕາແຈ ຕ້ອງຍອມຮັບຮູ້ການຕໍ່ສູ້ຂອງປະຊາຊົນ ເພື່ອກ້າວໄປສູ່ ການແກ້ໄຂບັນຫາລາວທາງການເມືອງ ຕາມແນວທາງສັນຕິວິທີ.

(ເຊີນຕິດຕາມ *ຕອນຕໍ່ໄປ.)*

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໔ ພຶສພາ ໒໐໐໙**